# ผนวก ข

## ສັນຍາວ່າດ້ວຍການສ້າງຕັ້ງຄະນະກຳມາທິການຮ່ວມມືດ້ານເສດຖະກິດ ການຄ້າ ແລະເຕັກນິກ ລະຫວ່າງລັດຖະບານລາວ ແລະລັດຖະບານຈີນ

## (สัญญาว่าด้วยการก่อตั้งคณะกรรมาธิการความร่วมมือ ด้านเศรษฐกิจ การค้า และเทคนิค ระหว่างลาวกับจีน)

11 มิถุนายน 1997

ເພື່ອເສີມຂະຫຍາຍສາຍພົວພັນມິດຕະພາບ ແລະການຮ່ວມມືທີ່ມີມູນເຊື້ອລະຫວາງ ສອງປະເທດ, ສົ່ງເສີມການຮ່ວມມືດ້ານເສດຖະກິດ ການຄ້າ ແລະເຕັກນິກ ບົນພື້ນຖານສະເໝີພາບ ຕ່າງຝ່າຍຕ່າງມີຜົນປະໂຫຍດ, ລັດຖະບານລາວ ແລະຈີນ (ຕໍ່ໄປນີ້ເອີ້ນຫຍໍ້ວ່າ "ຄູ່ສັນຍາ") ໄດ້ບັນລຸຂໍ້ຕົກລົງດັ່ງລຸ່ມນີ້:

### ມາດຕາ 1

ຄູ່ສັນຍາເຫັນພ້ອມກັນສ້າງຕັ້ງຄະນະກຳມາທິການຮ່ວມມືດ້ານເສດຖະກິດ ການຄ້າ ແລະເຕັກນິກລາວ-ຈີນ (ຕໍ່ໄປນີ້ເອີ້ນວ່າ "ຄະນະກຳມາທິການຮ່ວມມື")

### ມາດຕາ 2

ໜ້າທີ່ຕົ້ນຕໍຂອງຄະນະກຳມາທິການຮ່ວມມືມີຄື:

1. ເປີກສາຫາລືກ່ຽວກັບຄວາມອາດສາມາດ ດຳເນີນການຮ່ວມມືກັນດ້ວຍຫລາຍຮູບຫລາຍແບບ ໃນດ້ານເສດຖະກິດ ການຄ້າ ແລະເຕັກນິກ ຕົກລົງໂຄງການຮ່ວມມື ລະຫວ່າງສອງປະເທດ ໃນຂົງເຂດດັ່ງກ່າວ ແຕ່ງຕັ້ງຄະນະຜູ້ແທນໄປຢ້ຽມຢາມກັນ ເພື່ອຖອດຖອນບົດຮຽນ ແລະແລກປ່ຽນຂໍ້ມູນຂ່າວສານຊຶ່ງກັນແລະກັນ
2. ກວດກາຕິດຕາມສະພາບການ ການຈັດຕັ້ງປະຕິບັດ ບັນດາສັນຍາທີ່ກ່ຽວຂ້ອງກັບການຮ່ວມມືດ້ານເສດຖະກິດການຄ້າ ແລະເຕັກນິກ ທີ່ລັດຖະບານຂອງສອງປະເທດໄດ້ຮ່ວມກັນ
3. ພ້ອມກັນກວດກາສະພາບການ ການຈັດຕັ້ງປະຕິບັດໂຄງການຮ່ວມມື ລະຫວ່າງສອງປະເທດທັ້ງສອງອີງຕາມບັນດາສັນຍາທີ່ລັດຖະບານຂອງສອງປະເທດໄດ້ເຊັນກັນ

### ມາດຕາ 3

1. ປະທານຄະນະກຳມາທິການຮ່ວມມືຂອງແຕ່ລະຝ່າຍແມ່ນເອົາຂັ້ນຮອງລັດຖະມົນຕີ
2. ການຈັດຕັ້ງປະກອບພະນັກງານ ຂອງຄະນະກຳມາທິການຮ່ວມມືນັ້ນແມ່ນຄູ່ສັນຍາແຕ່ລະຝ່າຍຕົກລົງຈັດຕັ້ງໂດຍອີງຕາມຫົວຂໍ້ຂອງກອງປະຊຸມແຕ່ລະຄັ້ງ ແລະຕາມຄວາມຕ້ອງການໃນໜ້າວຽກຂອງຕົນເອງ

**ມາດຕາ 4**

ກອງປະຊຸມຂອງຄະນະກຳມາທິການຮ່ວມນີ້ ຈະຜັດປ່ຽນກັນຈັດຂຶ້ນທີ່ວຽງຈັນ ຫລືປັກກິ່ງໃນເມື່ອສອງຝ່າຍເຫັນວ່າມີຄວາມຈຳເປັນ

**ມາດຕາ 5**

ສັນຍາສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະມີຜົນບັງຄັບໃຊ້ເປັນເວລາ 5 ປີ ຖ້າວ່າຝ່າຍໃດຝ່າຍໜຶ່ງຫາກບໍ່ແຈ້ງເປັນລາຍລັກອັກສອນໃຫ້ອີກຝ່າຍໜຶ່ງ ເພື່ອຂໍຍົກເລີກສັນຍາສະບັບນີ້ 6 ເດືອນກ່ອນສັນຍາຈະໝົດອາຍຸ ສັນຍາສະບັບນີ້ຈະຖືກຕໍ່ອາຍຸຢ່າງອັດຕະໂນມັດ ແລະມີຜົນບັງຄັບໃຊ້ໄປອີກ 1 ປີ ແລະຈະຖືຕາມວິທີດັ່ງກ່າວນີ້ ເພື່ອຕໍ່ອາຍຸສັນຍາໃນປີຕໍ່ໄປ

ໃນໄລຍະທີ່ມີຜົນບັງຄັບໃຊ້ ສັນຍາສະບັບນີ້ສາມາດດັດແປງ ແລະເພີ່ມເຕີມໄດ້ໂດຍຜ່ານການເປີກສາຫາລື ເຫັນດີເປັນເອກະພາບລະຫວ່າງສອງຝ່າຍ

ສັນຍາສະບັບນີ້ ເຮັດທີ່ວຽງຈັນ ວັນທີ 11 ເດືອນ ມິຖຸນາ ປີ 1997 ເປັນສອງສະບັບຕົ້ນ ພາສາລາວ ແລະພາສາຈີນ ເຊິ່ງທັງສອງສະບັບລ້ວນແຕ່ມີຄຸນຄ່າເທົ່າທຽມກັນ

| | |
|---|---|
| ຕາງໜ້າລັດຖະບານແຫ່ງ | ຕາງໜ້າລັດຖະບານແຫ່ງ |
| ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ | ສາທາລະນະລັດປະຊາຊົນຈີນ |
| ທ່ານ ພົງສະຫວັດ ບຸບຜາ | ຫລີ ຣຸຍທົວ |